

Australian Aid | ASEAN-Australia Counter Trafficking

# ເສລີພາບໃນ ການເຄື່ອນຍ້າຍ ຂອງຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ

## ກົດໝາຍ, ນະໂຍບາຍ ແລະ ການປະຕິບັດ ໃນພາກພື້ນອາຊຽນ

## ກ່ຽວກັບຜູ້ຂຽນ

ບັນທຶກຂໍ້ມູນນີ້ ຂຽນຂຶ້ນໂດຍ ດຣ. Anne Gallagher ແລະ ດຣ. Marika McAdam. ເຊິ່ງອີງໃສ່ການສຶກສາກ່ຽວກັບການປະຕິບັດໃນສູນພັກເຊົາທີ່ປອດໄພປີ 2018 ທີ່ໄດ້ສຶກສາໃນພາກພື້ນອາຊຽນ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ. ວຽກງານດັ່ງກ່າວ ໄດ້ຖືກແຈ້ງໃຫ້ຊາບໃນບົດສຶກສາທີ່ໄດ້ເຮັດຂຶ້ນໃນປີ 2010. ຂໍສະແດງຄວາມຂອບໃຈ ຕໍ່ເຈົ້າໜ້າທີ່ ແລະ ພະນັກງານທີ່ເຮັດວຽກສະໜັບສະໜູນຜູ້ຖືກເຄາະຮ້າຍໃນບັນດາປະເທດສະມາຊິກອາຊຽນ ຜູ້ທີ່ແລກປ່ຽນຂໍ້ມູນ ແລະ ປະສົບການຢ່າງເປີດເຜີຍ.

**Australian Aid** | **ASEAN-Australia Counter Trafficking**

ການຈັດພິມເອກະສານສະບັບນີ້ ແມ່ນໄດ້ຮັບການສະໜັບສະໜູນ ໂດຍລັດຖະບານອົດສະຕຣາລີ ໂດຍຜ່ານກະຊວງການຕ່າງປະເທດ ແລະ ການຄ້າແຫ່ງປະເທດ ອົດສະຕຣາລີ. ຄວາມຄິດເຫັນທີ່ຢູ່ໃນເອກະສານນີ້ເປັນພຽງຄວາມຄິດເຫັນຂອງຜູ້ຂຽນພຽງຜູ້ດຽວ ແລະ ບໍ່ແມ່ນຄວາມຄິດເຫັນຂອງລັດຖະບານອົດສະຕຣາລີ.

ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ ( ASEAN-ACT) ເປັນແຜນງານທີ່ໄດ້ຮັບການສະໜັບສະໜູນໂດຍ ລັດຖະບານອົດສະຕຣາລີ ພາຍໃຕ້ການດຳເນີນງານຂອງ Cardno.

# ບັນຫາ

ໃນທົ່ວພາກພື້ນອາຊຽນ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມັກຈະພົບເຫັນຕົວເອງວ່າຖືກກັກຕົວໃນບາງຮູບແບບ. ຕົວຢ່າງ ຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ ອາດຈະຖືກກັກຕົວໄວ້ໃນສະຖານທີ່ກັກຕົວຄົນເຂົ້າ-ອອກ ເມືອງ, ໂດຍທົ່ວໄປແລ້ວ ຍ້ອນພວກເຂົາໄດ້ຖືກກໍານົດຕົວວ່າເປັນຜູ້ເຄື່ອນຍ້າຍແຮງງານ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

ສະຖານທີ່ກັກຕົວຄົນເຂົ້າ-ອອກເມືອງ ສາມາດເປັນຊະຕາກໍາຂອງຜູ້ຖືກເຄາະຮ້າຍທີ່ຖືກກໍານົດຕົວແລ້ວ ທີ່ຖືກສົ່ງກັບບ້ານ ຍ້ອນບໍ່ມີສະຖານທີ່ອື່ນໆ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດອາດຈະຖືກກັກຕົວ ຍ້ອນການກະທໍາຜິດທາງອາຍາທີ່ພົວພັນກັບການຄ້າມະນຸດ. ຕົວຢ່າງ: ການມີສ່ວນຮ່ວມໃນວຽກທີ່ເຮັດອາດຈະຜິດກົດໝາຍເຊັ່ນ ການຄ້າປະເວນີ, ຫຼື ການກະທໍາຜິດກົດໝາຍອື່ນໆ ເຊັ່ນ ການລັກລອບຂົນຢາເສບຕິດ ຫຼື ການເປັນຂໍທານ.

ໃນບາງປະເທດ ຜູ້ຖືກເຄາະຮ້າຍທີ່ໄດ້ຖືກກໍານົດຕົວແລ້ວ ໄດ້ຖືກສົ່ງໄປຢູ່ສູນພັກເຊົາ ທີ່ປອດໄພເຊິ່ງພວກເຂົາບໍ່ໄດ້ຮັບອະນຸຍາດໃຫ້ອອກໄປໃສ - ຫຼື ໄດ້ຮັບສິດທີ່ຈໍາກັດສິດເສລີພາບໃນການເຄື່ອນຍ້າຍ (ຕ.ຢ. ມີຜູ້ຕິດຕາມໄປນໍາ) ຕາມດຸນພິນິດຂອງພະນັກງານສູນພັກເຊົາ. ໃນສະຖານະການດັ່ງກ່າວນີ້, ຜູ້ຖືກເຄາະຮ້າຍ ຈໍາເປັນຕ້ອງໄດ້ມອບຊັບສິນສ່ວນຕົວ, ລວມທັງເງິນ, ເອກະສານ ແລະ ໂທລະສັບ ແລະ ຍອມປະຕິບັດຕາມກົດລະບຽບທີ່ຄວບຄຸມການປະພຶດຂອງພວກເຂົາ ພ້ອມທັງການລົງໂທດ ຖ້າຫາກບໍ່ປະຕິບັດຕາມ. ຮູບແບບການກັກຕົວນີ້, ເຊິ່ງເປັນຈຸດສຸມຂອງບັນທຶກຂໍ້ມູນນີ້, ໄດ້ຍົກໃຫ້ເຫັນເຖິງຄໍາຖາມທີ່ຈິງຈັງຕໍ່ກັບຄວາມຖືກຕ້ອງຕາມກົດໝາຍ ລວມທັງ ຄວາມຈໍາເປັນຂອງມັນ.



Photographer: Airam Dato Foundation / Unsplash

## ສູນພັກເຊົາທີ່ປິດລັບ ແມ່ນ ການກັກຂັງຜູ້ຖືກເຄາະຮ້າຍແທ້ບໍ່?

ການນຳເອົາຜູ້ຖືກເຄາະຮ້າຍໄປຢູ່ໃນສູນພັກເຊົາຈະບໍ່ຄ່ອຍຖືວ່າເປັນການກັກຂັງໂດຍຜູ້ມີອຳນາດສັ່ງ ແລະ ບັງຄັບປະຕິບັດ. ແຕ່ກົງກັນຂ້າມມັນຈະຖືກເບິ່ງວ່າເປັນຮູບແບບຂອງການປົກປ້ອງດູແລ, ເພາະວ່າຈຸດປະສົງດັ່ງກ່າວນີ້ຖືກພິຈາລະນາວ່າເປັນຜົນປະໂຫຍດສູງສຸດຂອງຜູ້ຖືກເຄາະຮ້າຍ. ແຕ່ກົດໝາຍສາກົນ ໄດ້ໃຫ້ນິຍາມການກັກຂັງຢ່າງຈະແຈ້ງວ່າຖືກຕັດສິດເສລີພາບສ່ວນບຸກຄົນ ຍົກເວັ້ນເປັນຜົນມາຈາກຖືກຕັດສິນວ່າມີຄວາມຜິດ (ໜ່ວຍງານຫຼັກຂອງອົງການສະຫະປະຊາຊາດ ເພື່ອປົກປ້ອງທຸກຄົນຈາກການກັກຂັງ ຫຼື ຈຳຄຸກໃນທຸກຮູບແບບ, ຮັບຮອງໂດຍ GA Res 43/173 ວັນທີ 9 ທັນວາ 1988). ຄຳວ່າ ການກັກຂັງສາມາດກວມເອົາຫຼາຍສະຖານະການທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຖືກກັກຂັງ, ບໍ່ວ່າຈະຢູ່ໃນຄຸກ, ສະຖານທີ່ກັກຕົວຂອງເຈົ້າໜ້າທີ່ຕຳຫຼວດ, ສະຖານທີ່ກັກຕົວຄົນເຂົ້າ-ອອກ ເມືອງ, ສະຖານທີ່ສະຫວັດດີການເດັກ, ໂຮງໝໍ ຫຼື ສູນພັກເຊົາ. ການສ້າງຄວາມເຂົ້າໃຈວ່າສະຖານະການໃດໜຶ່ງທີ່ເປັນໜຶ່ງໃນການກັກຂັງນັ້ນມີຄວາມສຳຄັນເພາະວ່າກົດລະບຽບພາຍໃນປະເທດ ແລະ ສາກົນມີພັນທະຜູກມັດຕໍ່ລັດຕ່າງໆເມື່ອໃດທີ່ການກັກຂັງແມ່ນຍອມຮັບໄດ້ ແລະ ມາດຕະການອັນໃດທີ່ຈຳເປັນໃນການປົກປ້ອງສິດຂອງຜູ້ທີ່ຖືກກັກຂັງ.





Photographer: Jo Aigner

# ການຫຼົບໜີ

ໃນສະຖານະການ ການຄ້າມະນຸດ, ຄຳວ່າ "ການຫຼົບໜີ" ຖືກນຳໃຊ້ເພື່ອອ້າງເຖິງສະຖານະການ ທີ່ຜູ້ຖືກເຄາະຮ້າຍຫຼຸດພົ້ນອອກຈາກຜູ້ຄ້າມະນຸດ. ແຕ່ຜູ້ຖືກເຄາະຮ້າຍອາດຈະພະຍາຍາມຫຼົບໜີຈາກສູນພັກເຊົາທີ່ພວກເຂົາຖືກສົ່ງໄປຢູ່. ສູນພັກເຊົາບາງບ່ອນຈະມີປະຕູຮົ້ວ, ຜູ້ຮັກສາຄວາມປອດໄພ, ກຳແພງ ແລະ ຮົ້ວທີ່ສູງ, ລັອກປະຕູ ແລະ ມີລວດໜາມ. ພວກເຂົາອາດຈະຖືກແຍກອອກຈາກພື້ນທີ່ ແລະ ຖືກຈຳກັດກັບການຕິດຕໍ່ກັບໂລກພາຍນອກ ໂດຍການຈຳກັດ ຫຼື ຕິດຕາມການເຂົ້າເຖິງໂທລະສັບ, ການໂທ ແລະ ຜູ້ທີ່ມາຢ້ຽມຢາມ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດບາງຄົນ ໄດ້ໃຊ້ຄວາມພະຍາຍາມຢ່າງສູງໃນການຮຽກຮ້ອງເອົາອິດສະຫຼະພາບຂອງຕົນ ໂດຍພະຍາຍາມເອົາຊະນະພະນັກງານປະຈຳສູນພັກເຊົາ, ການຈູດເຜົາຊັບສິນ ເພື່ອຫວັງວ່າຈະຖືກໄລ່ອອກຈາກສູນ, ທຳຮ້າຍຕົນເອງ ເພື່ອຫວັງວ່າຈະຖືກສົ່ງຕົວໄປໂຮງໝໍ, ພະຍາຍາມຂໍຄວາມຊ່ວຍເຫຼືອຜ່ານສະມາຊິກສາທາລະນະ, ຫຼື ເຮັດໃຫ້ຕົນເອງໄດ້ຮັບບາດເຈັບເພື່ອພະຍາຍາມຂ້າມຜ່ານສິ່ງກີດຂວາງທາງຮ່າງກາຍ. ຕົວຢ່າງເຫຼົ່ານີ້ ເນັ້ນໃຫ້ເຫັນເຖິງຄວາມ ເປັນຈິງ - ແລະ ຄວາມເປັນອັນຕະລາຍ - ການກັກຂັງໃນສູນພັກເຊົາ.

## ເປັນຫຍັງເຈົ້າໜ້າທີ່ລັດ ແລະ ຜູ້ອື່ນໆ ຈຶ່ງກັກຂັງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຢູ່ໃນສູນພັກເຊົາ?

ເຈົ້າໜ້າທີ່ລັດ ແລະ ຜູ້ອື່ນໆ ໃຫ້ເຫດຜົນດັ່ງຕໍ່ໄປນີ້ ເພື່ອເປັນເຫດຜົນທີ່ພວກເຂົາກັກຂັງຜູ້ຖືກເຄາະຮ້າຍທີ່ເປັນຜູ້ໃຫຍ່:

### ຄວາມຈຳເປັນໃນການປົກປ້ອງຜູ້ຖືກເຄາະຮ້າຍ:

> ການກັກຂັງຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໃນສູນພັກເຊົາສ່ວນໃຫຍ່ຖືວ່າເປັນມາດຕະການປົກປ້ອງຜູ້ຖືກເຄາະຮ້າຍຈາກໄພອັນຕະລາຍອື່ນໆອີກ, ໂດຍສະເພາະຈາກຜູ້ທີ່ຂູດຮີດພວກເຂົາ. ຈຸດອ່ອນຂອງຜູ້ຖືກເຄາະຮ້າຍ ທີ່ຈະຖືກຂົ່ມຂູ່ ແລະ ຖືກແກ້ແຄ້ນຈາກຜູ້ທີ່ຂູດຮີດ ພວກເຂົາ - ລວມເຖິງ ການຖືກຄ້າມະນຸດຄືນອີກ - ເຊິ່ງມັນແມ່ນຄວາມຈິງ. ແນວໃດກໍຕາມ, ມັນເປັນສິ່ງທີ່ຍາກໃນການຕັດສິນໃຈກ່ຽວກັບການກັກຂັງໃນສູນພັກເຊົາ ເຊິ່ງເຮັດຂຶ້ນບົນພື້ນຖານການປະເມີນແບບສ່ວນບຸກຄົນ ທີ່ສ້າງຄວາມສ່ຽງທີ່ອາດຈະເກີດຂຶ້ນໄດ້.

### ຄວາມຈຳເປັນໃນການສະໜັບສະໜູນຜູ້ຖືກເຄາະຮ້າຍ:

> ການກັກຂັງໃນສູນພັກເຊົາ ບາງຄັ້ງເປັນວິທີການທີ່ດີທີ່ສຸດ - ຫຼືເປັນວິທີການດຽວ - ເພື່ອຕອບສະໜອງຄວາມຊ່ວຍເຫຼືອອັນຈຳເປັນແບບຮີບດ່ວນຂອງຜູ້ຖືກເຄາະຮ້າຍ. ຖ້າຫາກບໍ່ມີການບັງຄັບໃຫ້ຢູ່ໃນສະຖານທີ່ ທີ່ມີການຊ່ວຍເຫຼືອແລ້ວ, ມັນກໍຈະມີການໂຕ້ຖຽງວ່າຜູ້ຖືກເຄາະຮ້າຍ ຈະບໍ່ໄດ້ຮັບການສະໜັບສະໜູນຫຼາຍຢ່າງ, ນັບແຕ່ການສະໜັບສະໜູນທາງດ້ານການແພດ ໄປເຖິງ ການໃຫ້ຄຳແນະນຳທາງດ້ານກົດໝາຍ. ໃນຫຼາຍໆປະເທດ ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໂດຍບໍ່ໄດ້ກັກຂັງພວກເຂົາ ແລະ ມັນເປັນສິ່ງທີ່ສຳຄັນ ທີ່ຈະມີການສອບຖາມເຫດຜົນວ່າເປັນຫຍັງ ວິທີການນີ້ ຈຶ່ງຖືວ່າບໍ່ສາມາດເຮັດໄດ້.

### ຍ້ອນຜູ້ຖືກເຄາະຮ້າຍຂາດສະຖານະທາງດ້ານກົດໝາຍ:

> ໃນບາງປະເທດ, ກົດໝາຍບໍ່ອະນຸຍາດໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັນແຮງງານເຄື່ອນຍ້າຍທີ່ບໍ່ຖືກຕ້ອງຕາມກົດໝາຍ ໄດ້ຮັບແມ່ນແຕ່ທີ່ພັກເຊົາຊົ່ວຄາວ. ໃນຄວາມເປັນຈິງ ພວກເຂົາລະເມີດກົດໝາຍວ່າດ້ວຍການເຂົ້າ - ອອກເມືອງ ເຊິ່ງບາງຄັ້ງແມ່ນຖືກນຳໃຊ້ເປັນເຫດຜົນໃນການກັກຂັງຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດໃນສູນຂອງລັດຖະບານ ຫຼື ສູນພັກເຊົາທີ່ລັດຖະບານອະນຸມັດ. ນອກນັ້ນ, ສູນພັກເຊົາແບບປິດລັບນັ້ນ ຍັງຖືວ່າເປັນສູນທີ່ອຳນວຍຄວາມສະດວກໃນຂະບວນການແບບສອງຝ່າຍ (ລວມທັງການສືບຫາຄອບຄົວ ແລະ ການຢັ້ງຢືນສັນຊາດ) ທີ່ມີຄວາມຈຳເປັນຕ້ອງເຮັດກ່ອນ ທີ່ຈະສົ່ງຜູ້ຖືກເຄາະຮ້າຍກັບຄືນປະເທດ ແລະ ສົ່ງກັບຄືນສູ່ຊຸມຊົນໃນປະເທດຕົ້ນທາງ.

### ຄວາມຕ້ອງການອັນຈຳເປັນເພື່ອຮັບປະກັນວ່າຜູ້ຖືກເຄາະຮ້າຍສາມາດເຂົ້າຮ່ວມການສືບສວນ - ສອບສວນ ແລະ ການດຳເນີນຄະດີ:

> ໂດຍປາສະຈາກຄຳໃຫ້ການຂອງຜູ້ຖືກເຄາະຮ້າຍ, ມັນເປັນສິ່ງທີ່ຍາກຫຼາຍ - ແລະ ບາງຄັ້ງບໍ່ສາມາດເປັນໄປໄດ້ - ເພື່ອຮັບປະກັນການດຳເນີນຄະດີຕໍ່ກັບຜູ້ຄ້າມະນຸດຢ່າງປະສົບຜົນສຳເລັດ. ແຕ່ຜູ້ຖືກເຄາະຮ້າຍ ມັກຈະແຮງຈູງໃຈພຽງແຕ່ເລັກນ້ອຍໃນການຮ່ວມມືໃນການດຳເນີນຄະດີ; ຜູ້ຖືກເຄາະຮ້າຍຫຼາຍຄົນ ຢາກກັບບ້ານ, ຫຼືຊອກຫາວຽກທີ່ດີກວ່າ. ດັ່ງນັ້ນ, ການໃຫ້ເຫດຜົນໃນການກັກຂັງຜູ້ຖືກເຄາະຮ້າຍ ຈຶ່ງມີສອງເຫດຜົນພື້ນຖານຄື: ເຫດຜົນທີໜຶ່ງ, ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການຖືກຂົ່ມຂູ່ ບໍ່ໃຫ້ຄວາມຮ່ວມມືກັບໜ່ວຍງານລັດຕ່າງໆ ແລະ ເຫດຜົນອັນທີສອງ, ເພື່ອຮັບປະກັນວ່າພວກເຂົາສາມາດເຂົ້າຮ່ວມໃນການດຳເນີນຄະດີໃນຖານະພະຍານໃນຄະດີການຄ້າມະນຸດ. ເພາະວ່າຂະບວນການຍຸຕິທຳທາງອາຍາສ່ວນໃຫຍ່ຈະໃຊ້ເວລາດົນ, ຜູ້ຖືກເຄາະຮ້າຍທີ່ເປັນພະຍານ ອາດຈະຖືກກັ່ງຂັງເປັນເວລາຫຼາຍເດືອນ, ຫຼື ອາດຈະຫຼາຍປີ, ບົນພື້ນຖານທີ່ມີລາຍຮັບພຽງເລັກນ້ອຍ ຫຼື ບໍ່ມີ ຫຼື ບໍ່ມີການຕິດຕໍ່ກັບຄອບຄົວ ຫຼື ບໍ່ມີການຮັບປະກັນວ່າ ຈະໄດ້ຮັບຜົນປະໂຫຍດໃດໆ ທີ່ເປັນຜົນໄດ້ຮັບຈາກຂະບວນການດຳເນີນຄະດີຕໍ່ກັບຜູ້ຄ້າມະນຸດ.

## ການກັກຂັງຜູ້ຖືກເຄາະຮ້າຍທີ່ເປັນຜູ້ໃຫຍ່ ບັນລຸຈຸດປະສົງ ຫຼື ບໍ່?

ເຖິງວ່າຂໍ້ໂຕ້ແຍ່ງແຕ່ລະອັນທີ່ກ່າວມາຂ້າງເທິງນັ້ນ ຈະເປັນປະໂຫຍດໃນບາງສະຖານະການ, ແຕ່ມັນກໍ ບໍ່ໄດ້ຖືກນຳໃຊ້ຄືກັບນະໂຍບາຍທີ່ນຳໃຊ້ທົ່ວໄປ. ໃນຕົວຈິງ, ໃນບາງກໍລະນີເຫັນວ່າ ມີຜົນກະທົບກົງກັນຂ້າມກັບສິ່ງທີ່ຕັ້ງໃຈໄວ້. ຕົວຢ່າງ, ແທນທີ່ຈະເປັນການປົກປ້ອງຜູ້ຖືກເຄາະຮ້າຍ, ການກັກຂັງພວກເຂົາໄວ້ໃນສູນພັກເຊົາທີ່ປິດລັບສາມາດເຮັດໃຫ້ພວກເຂົາມີອັນຕະລາຍເພີ່ມ: ການຄິດເຖິງປະສົບການຂອງການຖືກຄ້າມະນຸດເຊິ່ງສາມາດເປັນຜົນກະທົບທາງດ້ານຈິດໃຈໄດ້. ແທນທີ່ຈະເປັນການອຳນວຍຄວາມສະດວກການສະໜັບສະໜູນຜູ້ຖືກເຄາະຮ້າຍ, ການກັກຂັງຜູ້ຖືກເຄາະຮ້າຍໃນສູນພັກເຊົາ ທີ່ຂັດກັບເຈດຈຳນົງຂອງພວກເຂົາ ສາມາດເຮັດໃຫ້ພວກເຂົາຂາດໂອກາດໃນການຟື້ນຟູ ແລະ ການກ້າວຕໍ່ໄປ. ແລະ ໃນຂະນະທີ່ ກັກຂັງຜູ້ຖືກເຄາະຮ້າຍ ອາດຈະເຮັດໃຫ້ພວກເຂົາສາມາດເຂົ້າເຖິງຜູ້ສືບສວນ-ສອບສວນ ຫຼື ໄອຍະການ ໄດ້ຫຼາຍກວ່າ, ແຕ່ການຖືກຕັດສິດເສລີພາບ ອາດຈະເຮັດໃຫ້ຄຳໃຫ້ການພວກເຂົາບໍ່ມີນໍ້າໜັກ ຫຼື ຫຼຸດຄວາມຕັ້ງໃຈ ແລະ ຄວາມເຕັມໃຈໃນການຮ່ວມມື. ສຸດທ້າຍ ສິ່ງທີ່ສຳຄັນຕ້ອງສັງເກດຜົນກະທົບ ຂອງຜູ້ທີ່ເຮັດວຽກສະໜັບສະໜູນຜູ້ຖືກເຄາະຮ້າຍພາຍໃນສູນພັກເຊົາ ເຊິ່ງເປັນຜູ້ທີ່ຮຽກຮ້ອງໃຫ້ປະຕິບັດໜ້າທີ່ເປັນຜູ້ຮັກສາຄວາມປອດໄພ ແລະ ຕ້ອງຮັບຜິດຊອບຕໍ່ກັບ ການຫຼົບໜີ.

## ກົດໝາຍກຳນົດແນວໃດ?

ໃນຂະນະທີ່ການປະຕິບັດຕົວຈິງຍັງເກີດຂຶ້ນຢູ່, ການກັກຂັງຜູ້ຖືກເຄາະຮ້າຍຢູ່ໃນສູນພັກເຊົາ ແລະ ສະຖານທີ່ອື່ນໆ ກຳລັງມີໜ້ອຍລົງ. ສິ່ງນີ້ສະທ້ອນໃຫ້ເຫັນເຖິງຄວາມເຂົ້າໃຈທີ່ເພີ່ມຂຶ້ນຕໍ່ກັບວິທີການດັ່ງກ່າວທີ່ບໍ່ສອດຄ່ອງກັບສິ່ງທີ່ຂຽນໄວ້ ແລະ ເຈດຈຳນົງຂອງກອບກົດໝາຍທີ່ໄດ້ມີການພັດທະນາຂຶ້ນກ່ຽວກັບການຄ້າມະນຸດ.

ແນ່ນອນວ່າ, ການກັກຂັງແບບປົກກະຕິ ເປັນການລະເມີດຫຼັກການຂອງກົດໝາຍສາກົນຈຳນວນໜຶ່ງ (ລວມທັງສິດເສລີພາບໃນການເຄື່ອນຍ້າຍ ແລະ ການຫ້າມກັກຂັງໂດຍພະລະການ) ແລະ, ໂດຍປາສະຈາກສະເພາະເຈາະຈົງ, ການໃຫ້ເຫດຜົນສະເພາະສ່ວນບຸກຄົນ ແມ່ນຜິດກົດໝາຍ. ເບິ່ງຂໍ້ມູນເພີ່ມເຕີມ ໃນກ່ອງຂໍ້ມູນດ້ານລຸ່ມ.

## ສົນທິສັນຍາອາຊຽນວ່າດ້ວຍການຕ້ານ ການຄ້າມະນຸດ

ແຕ່ລະລັດພາຄີ ຈະບໍ່ກັກຕົວບຸກຄົນ ທີ່ໄດ້ຖືກກຳນົດຕົວໂດຍບໍ່ມີເຫດຜົນອັນສົມຄວນ ໂດຍອົງການທີ່ມີສິດອຳນາດ ໃນການກັກຂັງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນສະຖານທີ່ກັກຂັງ ຫຼື ໃນຄຸກ, ກ່ອນ, ລະຫວ່າງ ຫຼື ພາຍຫຼັງການດຳເນີນຄະດີແພ່ງ, ອາຍາ ຫຼື ທາງບໍລິຫານ **ສຳລັບຄະດີການຄ້າມະນຸດ. ມາດຕາ 14(8)**



### ການກັກຂັງຜູ້ຖືກເຄາະຮ້າຍ ຈະເປັນການລະເມີດສິດທິມະນຸດ ເມື່ອໃດ?

ຄວາມສ່ຽງຂອງການກັກຂັງ ຈະມີລັກສະນະຜິດກົດໝາຍ ຫຼື ກັກຂັງໂດຍພະລະການ ຈະສູງ ຖ້າຫາກມັນສາມາດສະແດງໃຫ້ເຫັນວ່າການກັກຂັງດັ່ງກ່າວ ສອດຄ່ອງກັບໜຶ່ງ ຫຼື ຫຼາຍເງື່ອນໄຂ ດັ່ງນີ້:

- ການກັກໂຕ ບໍ່ໄດ້ຖືກກຳນົດໄວ້ ໃນກົດຫມາຍ ຫລື ຖືວ່າຄັດຕໍ່ກົດຫມາຍ
- ການກັກຂັງມີໄວ້ສະເພາະ - ຫຼື ກຳນົດໄວ້ - ໃນລັກສະນະທີ່ມີການຈຳແນກ (ຕ.ຢ. ນຳໃຊ້ສະເພາະກັບແມ່ຍິງ ແລະ ເດັກຍິງ/ເດັກນ້ອຍ);
- ການກັກຂັງ ກຳນົດໄລຍະເວລາຍາວນານ, ບໍ່ກຳນົດລາຍລະອຽດ ຫຼື ບໍ່ມີກຳນົດເວລາ;
- ການກັກຂັງບໍ່ຍຸຕິທຳ, ບໍ່ສາມາດຄາດເດົາໄດ້ ຫຼື ບໍ່ສົມເຫດ ສົມຜົນ;
- ການກັກຂັງ ບໍ່ໄດ້ຢູ່ພາຍໃຕ້ການກວດກາຂອງອົງການຕຸລາການ ຫຼື ອຳນາດການປົກຄອງ ທີ່ສາມາດຢັ້ງຢືນຄວາມຖືກຕ້ອງຕາມກົດໝາຍ ແລະ ຄວາມຈຳເປັນຕໍ່ເນື່ອງໃນສະພາບການຕ່າງໆ, ເຊິ່ງເຮັດໃຫ້ມີຄວາມເປັນໄປໄດ້ ໃນການປ່ອຍຕົວບ່ອນທີ່ບໍ່ມີພື້ນຖານຄວາມຕໍ່ເນື່ອງທີ່ມີຢູ່.

Photographer: Ario Adityo

**ທີ່ມາ: OHCHR, ຂໍ້ສະເໜີແນະນຳ ຕໍ່ກັບຫຼັກການ ແລະ ຄຳແນະນຳກ່ຽວກັບການຄ້າມະນຸດຂອງອົງການສະຫະປະຊາຊາດ, ໜ້າ 135-136.**

## ບົດບາດຍິງ-ຊາຍ ແລະ ການກັກຂັງໃນສູນພັກເຊົາ

ການປະຕິບັດການກັກຂັງຜູ້ຖືກເຄາະຮ້າຍໃນພາກພື້ນອາຊຽນ ມີບົດບາດຍິງ-ຊາຍສູງ. ຜູ້ຖືກຄ້າມະນຸດສ່ວນໃຫຍ່ ທີ່ຖືກກັກຂັງຢູ່ໃນສູນພັກເຊົາແມ່ນຜູ້ຍິງ. ນີ້ແມ່ນຢ່າງນ້ອຍຜູ້ຍິງ ແລະ ເດັກຍິງ ໄດ້ຮັບການພິຈາລະນາວ່າ ຈຳເປັນຕ້ອງໄດ້ຮັບການປົກປ້ອງໂດຍສູນພັກເຊົາທີ່ປິດລັບ. ອີກເຫດຜົນໜຶ່ງ ແມ່ນຜູ້ຍິງ ແລະ ເດັກຍິງ ມີທ່າແຮງໃນການຖືກກຳນົດຕົວເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຜ່ານຊ່ອງທາງທີ່ເປັນທາງການ ແລະ ເຂົ້າສູ່ລະບົບການປົກປ້ອງທີ່ເປັນທາງການ ແລະ ບໍ່ເປັນທາງການ ຖ້າທຽບໃສ່ກັບຜູ້ຊາຍ ແລະ ເດັກຊາຍ. ຜູ້ຖືກເຄາະຮ້າຍທີ່ເປັນຜູ້ຊາຍ ສ່ວນໃຫຍ່ໄດ້ຖືກກຳນົດຕົວຜູ້ວ່າເປັນແຮງງານເຄື່ອນຍ້າຍຜິດກົດໝາຍ, ຖືກນຳສົ່ງໄປສະຖານທີ່ກັກຂັງຄົນເຂົ້າ-ອອກ ເມືອງ ແລະ ຖືກເນລະເທດກັບປະເທດ. ດ້ວຍເຫດນັ້ນ, ພວກເຂົາອາດຈະບໍ່ສາມາດເຂົ້າເຖິງການບໍລິການ ແລະ ການສະໜັບສະໜູນ ທີ່ພວກເຂົາມີສິດໄດ້ຮັບໃນຖານະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ໃນຂະນະທີ່ບາງປະເທດສະມາຊິກອາຊຽນ ໄດ້ສ້າງສູນພັກເຊົາສຳລັບຜູ້ຊາຍ ແລະ ເດັກຊາຍ, ແຕ່ຍັງມີໜ້ອຍຫຼາຍ ແລະ ຕາມປົກກະຕິຈະຢູ່ພາຍໃຕ້ກົດລະບຽບທີ່ແຕກຕ່າງກັນ ທີ່ອະນຸຍາດໃຫ້ມີສິດເສລີພາບໃນການເຄື່ອນຍ້າຍຫຼາຍກວ່າ. ກົດໝາຍສາກົນ ແລະ ພາກພື້ນ ຫ້າມການເລືອກປະຕິບັດຕໍ່ກັບຄວາມເປັນເພດ ຫຼື ທາງເພດ ຢ່າງຊັດເຈນ. ການປະຕິບັດການກັກຂັງຜູ້ຍິງ ແລະ ເດັກຍິງ ແບບປົກກະຕິ (ລວມທັງການປະຕິບັດການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ຊາຍ ແລະ ເດັກຊາຍ), ຖືເປັນການເລືອກປະຕິບັດໂດຍແທ້ຈິງ ແລະ ບໍ່ຖືກຕ້ອງຕາມກົດໝາຍ.

ໃນກໍລະນີ ທີ່ການບໍລິການສູນພັກເຊົາບໍ່ປັບໄປຕາມຄວາມຕ້ອງການ, ຜົນປະໂຫຍດ ແລະ ຄວາມເໝາະສົມຂອງແຕ່ລະບຸກຄົນ, ຜົນໄດ້ຮັບອາດເຮັດໃຫ້ມີການກຳນົດມາດຕະຖານຕໍ່ກັບບົດບາດຍິງ-ຊາຍ ຕໍ່ກັບຜູ້ທີ່ອາໄສຢູ່ໃນຮ່ວມກັບພວກເຂົາ. ໃນປະເທດໜຶ່ງ ມີການສັງເກດເຫັນວ່າເດັກຍິງໄວໜຸ່ມສ່ວນໃຫຍ່ມັກໄດ້ຮັບທາງເລືອກໃນການເຮັດກິດຈະກຳຕ່າງໆ ເຊິ່ງລວມມີ ການຫຍິບເຄື່ອງ. ການສວດມົນ ແລະ ບໍ່ໃຫ້ໂອກາດໃນການຫຼິ້ນກິລາ, ໃນຂະນະທີ່ຜູ້ຍິງທີ່ເປັນຜູ້ໃຫຍ່ມັກຈະຖືກຫ້າມ ບໍ່ໃຫ້ສູບຢາສູບເພາະມີການກຳນົດຄວາມຄາດຫວັງວ່າ ຜູ້ຍິງຄວນປະພຶດ ຫຼື ບໍ່ປະພຶດແນວໃດ.

| ເຫດຜົນ | ສົມມຸດຕິຖານ | ປັດໄຈທີ່ເຮັດໃຫ້ເກີດສົມມຸດຕິຖານ | ຍຸດທະສາດໃນການທ້າທາຍສົມມຸດຕິຖານ ແລະ ການຫຼຸດຜ່ອນການກັກຂັງ |
|---|---|---|---|
| **"ຜູ້ຄ້າມະນຸດອາດຈະທຳຮ້າຍ ຫຼື ຂົ່ມຂູ່ຜູ້ຖືກເຄາະຮ້າຍ"** | > ຜູ້ຖືກເຄາະຮ້າຍ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນຍ້າຍຢ່າງອິດສະຫຼະ ຈະໄດ້ຮັບບາດເຈັບ, ຖືກຂ້າ ຫຼື ຖືກຫ້າມບໍ່ໃຫ້ການເປັນພະຍານຕໍ່ກັບຜູ້ຄ້າມະນຸດ.<br><br>> ຜູ້ຖືກເຄາະຮ້າຍ, ໂດຍສະເພາະແມ່ຍິງ ແລະ ເດັກຍິງຈຳເປັນຕ້ອງຢູ່ ໃນສູນພັກເຊົາທີ່ປອດໄພ. | > ເຫດການ (ທີ່ມີຈິງ ຫຼື ເປັນຂ່າວປອມ) ທີ່ຜູ້ຄ້າມະນຸດທຳຮ້າຍຜູ້ຖືກເຄາະຮ້າຍ ທີ່ຢູ່ນອກສູນພັກເຊົາ; ຜູ້ຖືກເຄາະຮ້າຍທີ່ຢູ່ໃນສູນ ໄດ້ຮັບການແຊກແຊງຈາກຜູ້ຄ້າມະນຸດ ຫຼື ຜູ້ທີ່ກ່ຽວຂ້ອງກັບພວກເຂົາ. | > ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ພະນັກງານສູນພັກເຊົາ ເຮັດວຽກຮ່ວມກັນຢ່າງໃກ້ຊິດໃນການປະເມີນຜູ້ຖືກເຄາະຮ້າຍ, ຄຸ້ມຄອງ, ຫຼຸດຜ່ອນຄວາມສ່ຽງ ທີ່ອາດຈະເກີດຂຶ້ນ ແລະ ສະເພາະເຈາະຈົງ.<br><br>> ເຈົ້າໜ້າທີ່ບັງຄັບປະຕິບັດກົດໝາຍ ແລະ ພະນັກງານສູນພັກເຊົາ ໄດ້ຮັບການຝຶກອົບຮົມໃນການປະເມີນຄວາມສ່ຽງ ແລະ ເຂົ້າຮ່ວມໃນການຄຸ້ມຄອງຄວາມສ່ຽງ / ຫຼຸດຜ່ອນຄວາມສ່ຽງ. |
| **"ຜູ້ຖືກເຄາະຮ້າຍຈຳເປັນຕ້ອງໄດ້ຮັບການປົກປ້ອງຈາກຕົນເອງ"** | > ຜູ້ຖືກເຄາະຮ້າຍ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນຍ້າຍຢ່າງອິດສະຫຼະ ຈະຕັດສິນໃຈທີ່ຜິດພາດ: ຫຼົບໜີ ແລະ ກັບໄປຫາຜູ້ຄ້າມະນຸດ ແລະ / ຫຼື ຮູບແບບການຂູດຮີດ ຫຼື ເງື່ອນໄຂຂອງການເຮັດວຽກ. | > ເຫດການ (ທີ່ມີຈິງ ຫຼື ເປັນຂ່າວປອມ) ທີ່ຜູ້ຖືກເຄາະຮ້າຍພະຍາຍາມຫຼົບໜີຈາກສູນພັກເຊົາທີ່ປິດລັບ.<br><br>> ອັດຕາທີ່ບໍ່ສົມສ່ວນ ທີ່ເນັ້ນໃສ່ຜູ້ຖືກເຄາະຮ້າຍ ທີ່ເປັນຜູ້ຍິງ ແລະ ການຂູດຮີດທາງເພດ.<br><br>> ບັນຖັດຖານຂອງບິດາ ແລະ ມານດາ ກ່ຽວກັບບົດບາດຍິງຊາຍ ແລະ ຄວາມຄາດຫວັງຕໍ່ກັບຜົນປະໂຫຍດສູງສຸດ ຂອງຜູ້ຖືກເຄາະຮ້າຍ. | > ໜ່ວຍງານຍຸຕິທຳທາງອາຍາ ແລະ ສະໜັບສະໜູນຜູ້ຖືກເຄາະຮ້າຍ ຢືນຢັນ ແລະ ຍຶດໝັ້ນຕໍ່ກັບຫຼັກການທີ່ວ່າ ຜູ້ຖືກເຄາະຮ້າຍຈະບໍ່ຖືກດຳເນີນຄະດີ ຫຼື ຖືກລົງໂທດຕໍ່ກັບການກະທຳທີ່ເກີດຂຶ້ນຈາກການຖືກຄ້າມະນຸດ ທີ່ມີຕໍ່ພວກເຂົາ.<br><br>> ໜ່ວຍງານຍຸຕິທຳທາງອາຍາ ແລະ ໜ່ວຍງານສະໜັບສະໜູນຜູ້ຖືກເຄາະຮ້າຍລວມທັງພະນັກງານສູນພັກເຊົາ ມີຄວາມຮູ້ ແລະ ຄວາມສາມາດເຂົ້າໃຈເຖິງການເຄື່ອນເໜັງຂອງການຄ້າມະນຸດ ແລະ ຊື່ນຊົມຕໍ່ກັບສິດໃນການຕັດສິນໃຈຂອງຜູ້ຖືກເຄາະຮ້າຍທີ່ເປັນຜູ້ໃຫຍ່ - ເຖິງວ່າເປັນການຕັດສິນໃຈທີ່ອາດຈະບໍ່ດີ - ສຳລັບພວກເຂົາເອງ. |
| **"ສັງຄົມຕ້ອງໄດ້ຮັບການປົກປ້ອງຈາກຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ"** | > ຜູ້ຖືກເຄາະຮ້າຍທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນຍ້າຍຢ່າງອິດສະຫຼະ ອາດຈະຫາຍໂຕເຂົ້າໄປໃນຊຸມຊົນ ແລະ ອາດຈະມີສ່ວນຮ່ວມ ຕໍ່ກັບກິດຈະກຳທາງອາຍາ ແລະ/ ຫຼື ເຮັດຜິດສິນທຳ. | > ການຕັດສິນຄຸນຄ່າ ໂດຍສ່ວນຕົວ, ໂດຍສະເພາະກ່ຽວກັບ ບັນຖັດຖານທາງບົດບາດຍິງ - ຊາຍ ແລະ ຄວາມຄາດຫວັງ.<br><br>> ຄວາມຂັດແຍ່ງກ່ຽວກັບການຄວບຄຸມ ການເຄື່ອນຍ້າຍແຮງງານຕໍ່ກັບການຕອບສະໜອງ ການຄ້າມະນຸດ. | > ຜົນສະທ້ອນ ຂອງໄລຍະເວລາ ແລະ ວິທີການອື່ນໆ ທີ່ຜູ້ຖືກເຄາະຮ້າຍ ທີ່ເປັນຄົນຕ່າງປະເທດສາມາດຢູ່ອາໄສ ແລະ ເຮັດວຽກໂດຍຖືກຕ້ອງຕາມກົດໝາຍ, ເຖິງຈະມີເວລາຈຳກັດ.<br><br>> ລະບົບການຄຸ້ມຄອງ ຄະດີສຳລັບຜູ້ຖືກເຄາະຮ້າຍ ແຕ່ລະຄົນ, ໄດ້ຮັບການສະໜັບສະໜູນ ໂດຍການບໍລິການ ທາງສັງຄົມຢ່າງເໝາະສົມ ຈາກພະນັກງານ ຜູ້ທີ່ໄດ້ຮັບການຝຶກອົບຮົມ ແລະ ມີແຮງຈູງໃຈໃນ ການເຮັດວຽກ ຮ່ວມກັບ ຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ. ຄວາມເຂົ້າໃຈທີ່ສູງຕໍ່ກັບ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ຄວາມເອົາໃຈໃສ່ຕໍ່ກັບບົດບາດຍິງ-ຊາຍ. |

## ບັນຫາສະເພາະຜູ້ຖືກເຄາະຮ້າຍທີ່ເປັນເດັກ

ເມື່ອພິຈາລະນາບັນຫາການກັກຂັງໃນສູນພັກເຊົາ, ມັນມີຄວາມສຳຄັນທີ່ຈະຮັບຮູ້ຄວາມແຕກຕ່າງພື້ນຖານບາງຢ່າງລະຫວ່າງຜູ້ຖືກເຄາະຮ້າຍທີ່ເປັນຜູ້ໃຫຍ່ ແລະ ຜູ້ຖືກເຄາະຮ້າຍທີ່ເປັນເດັກນ້ອຍ. ເດັກນ້ອຍ ຂາດໜ່ວຍງານທາງດ້ານກົດໝາຍ ແລະ ອາດຈະມີຄວາມສ່ຽງຫຼາຍກວ່າທີ່ຈະຖືກທຳຮ້າຍ. ໃນການພິຈາລະນາຜົນປະໂຫຍດສູງສຸດຂອງເດັກ ອາດນຳໄປສູ່ການຕັດສິນໃຈວ່າ ພວກເຂົາຄວນຈະ (ຫຼື ບໍ່ຄວນຈະ) ຖືກກັກຂັງໃນສູນພັກເຊົາ. ກົດໝາຍກ່ຽວກັບການກັກຂັງເດັກ ມີຄວາມເຂັ້ມງວດຫຼາຍ ແລະ ມີຄວາມຈຳເປັນຕ້ອງປະຕິບັດຕາມຢ່າງໃກ້ຊິດໃນກໍລະນີທີ່ມີການຕັດສິນໃຈໃຫ້ເດັກ ໄປຢູ່ໃນສູນພັກເຊົາ. ຖ້າຫາກສິດ ແລະພັນທະ ທີ່ກຳນົດໄວ້ຂ້າງລຸ່ມ ບໍ່ໄດ້ຖືກກຳນົດໄວ້, ການກັກຂັງເດັກ ຈະເປັນການກະທຳທີ່ຜິດກົດໝາຍ.

Photographer: Remi Yuan / Unsplash







## ກົດລະບຽບທີ່ກ່ຽວຂ້ອງກັບການກັກຂັງຜູ້ຖືກເຄາະຮ້າຍທີ່ເປັນເດັກ

ຄະນະກຳມະການກ່ຽວກັບສິດທິເດັກ ໄດ້ຢໍ້າວ່າ ຕາມລະບຽບທົ່ວໄປເດັກບໍ່ຄວນຈະຖືກຕັດສິດເສລີພາບ (ຂໍ້ສະເໜີແນະທົ່ວໄປ ຂໍ້ທີ 6). ສົນທິສັນຍາວ່າດ້ວຍສິດທິເດັກ ສະແດງໃຫ້ເຫັນວ່າ ການກັກຂັງເດັກໃດໆ ຄວນເປັນມາດຕະການສຸດທ້າຍ ແລະ ມີໄລຍະເວລາທີ່ສັ້ນທີ່ສຸດ (ມາດຕາ 37(b)). ດ້ວຍເຫດນັ້ນ, ທຸກໆການຕັດສິນໃຈທີ່ຕິດພັນກັບການກັກຂັງເດັກຕ້ອງເປັນຜົນປະໂຫຍດສູງສຸດຂອງເດັກ, ແລະ ການກັກຂັງໃດໆຈະຕ້ອງ:

- ສອດຄ່ອງຕາມກົດໝາຍ;
- ບໍ່ມີການຈຳແນກ ແລະ ບໍ່ມີການກັກຂັງໂດຍພະລະການ; ແລະ,
- ມີໄລຍະເວລາທີ່ສັ້ນ ແລະ ເໝາະສົມທີ່ສຸດ.

ເດັກຜູ້ທີ່ຖືກກັກຂັງ ມີສິດດັ່ງນີ້:

- ຖືກແຍກອອກຈາກຜູ້ໃຫຍ່ ເວັ້ນແຕ່ ໄດ້ຖືກພິຈາລະນາວ່າ ບໍ່ແມ່ນຜົນປະໂຫຍດສູງສຸດຂອງເດັກ;
- ຮັກສາການຕິດຕໍ່ກັບ ຄອບຄົວພວກເຂົາ ຜ່ານການຕິດຕໍ່ສື່ສານ ແລະ ການຢ້ຽມຢາມ (ຍົກເວັ້ນໃນສະຖານະການພິເສດ, ເຊັ່ນ ການມີສ່ວນຮ່ວມຂອງຄອບຄົວ ໃນສະຖານະການການຄ້າມະນຸດ);
- ເຂົ້າເຖິງການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ການຊ່ວຍເຫຼືອອື່ນໆ ຢ່າງເໝາະສົມ ໂດຍໄວ, ລວມທັງ ການສະໜັບສະໜູນໃນການຟື້ນຟູທາງດ້ານຮ່າງກາຍ ແລະ ຈິດໃຈ ແລະ ການກັບຄືນສູ່ສັງຄົມໃນສະພາບແວດລ້ອມທີ່ສົ່ງເສີມສຸຂະພາບ, ການເຄົາລົບຕົນເອງ ແລະ ກຽດສັກສີ.
- ເພື່ອທ້າທ້າຍຄວາມຖືກຕ້ອງຕາມກົດໝາຍ ໃນການຕັດສິດເສລີພາບຂອງພວກເຂົາ ຕໍ່ໜ້າສານ ຫຼື ອົງການທີ່ມີສິດອຳນາດ, ໜ່ວຍງານທີ່ເປັນກາງ ແລະ ອິດສະຫຼະ, ແລະ ໄດ້ຮັບການຕັດສິນໃຈໂດຍທັນທີ.

Photographer: Cxxiohi / Unsplash

**ການລຶບລ້າງການກັກຂັງໃນສູນພັກເຊົາ ແລະ ການປັບປຸງສະພາບການຂອງຜູ້ຖືກເຄາະຮ້າຍໃນສູນພັກເຊົາ: ໂອກາດ ແລະ ຍຸດທະສາດຕ່າງໆ:**

**ສົນທິສັນຍາອາຊຽນໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງຕໍ່ກັບຄຳໝັ້ນສັນຍາຮ່ວມກັນຂອງບັນດາລັດສະມາຊິກອາຊຽນຕໍ່ກັບສິດທິ ແລະ ການຕອບໂຕ້ການຄ້າມະນຸດໂດຍເອົາຜູ້ຖືກເຄາະຮ້າຍເປັນໃຈກາງ - ເຊິ່ງລວມມີການຫຼີກລ້ຽງການກັກຂັງຜູ້ຖືກເຄາະຮ້າຍໃນທຸກບ່ອນທີ່ເປັນໄປໄດ້. ໂອກາດ ແລະ ຍຸດທະສາດຕ່າງໆໄດ້ຖືກສະເໜີເພື່ອກ້າວໄປສູ່ຄຳໝັ້ນສັນຍາຮ່ວມກັນ:**

## ໄດ້ຮັບຄວາມຍິນຍອມຢ່າງເປັນລາຍລັກອັກສອນເມື່ອເຂົ້າໄປໃນສູນພັກເຊົາ ແລະ ເປັນປົກກະຕິຕໍ່ຈາກນັ້ນ:

> ຜູ້ຖືກເຄາະຮ້າຍ ທີ່ເປັນຜູ້ໃຫຍ່ທຸກຄົນ ຄວນຈະໄດ້ຮັບຄວາມຍິນຍອມຢ່າງຊັດເຈນ ໃນການເຂົ້າໄປຢູ່ໃນສູນພັກເຊົາ. ຄວາມຍິນຍອມນັ້ນຄວນຈະອີງໃສ່ພື້ນຖານຂໍ້ມູນຢ່າງຄົບຖ້ວນວ່າເປັນຫຍັງພວກເຂົາຈຶ່ງຕ້ອງຢູ່ໃນສູນພັກເຊົາ; ພວກເຂົາຄາດຫວັງຈະຢູ່ໃນສູນພັກເຊົາດົນປານໃດ; ແລະ ພາຍໃຕ້ເງື່ອນໄຂໃດທີ່ພວກເຂົາຈະໄດ້ຮັບການປົກປ້ອງ. ຂໍ້ມູນທີ່ຄົບຖ້ວນໝາຍເຖິງ ຂໍ້ມູນທີ່ກ່ຽວຂ້ອງບໍ່ຄວນຖືກກັກໄວ້ບໍ່ໃຫ້ຜູ້ຖືກເຄາະຮ້າຍ, ລວມທັງສິດຂອງພວກເຂົາ. ຂໍ້ມູນຄວນຈະຖືກຖ່າຍທອດໃນວິທີການທີ່ຜູ້ຖືກເຄາະຮ້າຍເຂົ້າໃຈ, ໂດຍມີການຄຳນຶງເຖິງພາສາ, ອາຍຸ ແລະ ຄວາມເປັນພິການທີ່ພວກເຂົາອາດຈະມີ. ຜູ້ຖືກເຄາະຮ້າຍອາດຈະຖອນຄວາມຍິນຍອມເວລາໃດກໍໄດ້ ແລະ ເຈົ້າໜ້າທີ່ຂອງສູນພັກເຊົາຄວນຈະກວດສອບຢ່າງເປັນປົກກະຕິວ່າຜູ້ຖືກເຄາະຮ້າຍສືບຕໍ່ຍິນຍອມທີ່ຈະຢູ່ໃນສູນພັກເຊົາ.

## ເກັບຮັກສາຂໍ້ມູນທີ່ບັນທຶກ ແລະ ຖືກຕ້ອງຂອງຜູ້ຖືກເຄາະຮ້າຍແຕ່ລະຄົນ ໃນສູນພັກເຊົາ:

> ການບັນທຶກຢ່າງເປັນລາຍລັກອັກສອນຄວນບັນທຶກຄວາມຍິນຍອມເບື້ອງຕົ້ນ ຂອງຜູ້ຖືກເຄາະຮ້າຍ ໃນການເຂົ້າໄປຢູ່ໃນສູນພັກເຊົາ; ຊັບສິນໃດແດ່ທີ່ຖືກຍຶດໄວ້ ຫຼື ເກັບຮັກສາໄວ້ເພື່ອຄວາມປອດໄພ; ເມື່ອໃດ ແລະ ເປັນຫຍັງ; ການຖອນຄືນຄວາມຍິນຍອມຂອງຜູ້ຖືກເຄາະຮ້າຍ ໃຫ້ຢູ່ໃນສູນພັກເຊົາ; ເຫດຜົນທີ່ພວກເຂົາຍັງສືບຕໍ່ຢູ່ໃນສູນພັກເຊົາ; ເຫດຜົນເຫຼົ່ານັ້ນ ຖືກຕັດສິນແນວໃດ? ເມື່ອໃດ ແລະ ຕັດສິນໂດຍໃຜ? ແລະ ການຕັດສິນນັ້ນໄດ້ຖືກອະທິບາຍໃຫ້ກັບຜູ້ຖືກເຄາະຮ້າຍເມື່ອໃດ, ແນວໃດ ແລະ ອະທິບາຍໂດຍໃຜ. ການເກັບຮັກສາດັ່ງກ່າວ ຄວນເກັບຮັກສາຢ່າງປອດໄພຕາມຂໍ້ກຳນົດ ແລະ ກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນແຫ່ງຊາດ.

## ໃຫ້ເວລາຜູ້ຖືກເຄາະຮ້າຍຕັດສິນໃຈໃນສິ່ງທີ່ພວກເຂົາຕ້ອງການເຮັດ:

> ຈຳນວນປະເທດທີ່ເພີ່ມຂຶ້ນ ໄດ້ໃຫ້ສິດຜູ້ຖືກເຄາະຮ້າຍໃນການທົບທວນ ແລະ ໄລຍະເວລາໃນການຟື້ນຟູ, ໃນຊ່ວງເວລາທີ່ພວກ ເຂົາໄດ້ຮັບທີ່ພັກ ແລະ ການຊ່ວຍເຫຼືອທີ່ຈະຊ່ວຍພວກເຂົາໃນການຕັດສິນໃຈຕໍ່ກັບທາງເລືອກຂອງພວກເຂົາ, ລວມທັງການຕັດສິນໃຈທີ່ຈະຮ່ວມມືກັບໜ່ວຍງານ ຍຸຕິທຳທາງອາຍາ ໃນການດຳເນີນຄະດີຕໍ່ກັບຜູ້ທີ່ຂູດຮີດພວກເຂົາ. ຈຸດປະສົງຂອງການທົບທວນ ແລະ ໄລຍະເວລາໃນການຟື້ນຟູເພື່ອເຮັດໃຫ້ຜູ້ຖືກເຄາະຮ້າຍຮູ້ສຶກປອດໄພ ແລະ ໄດ້ຮັບການສະໜັບສະໜູນ, ການກັກຂັງ ບໍ່ມີບ່ອນໃດທີ່ຈະມີການລິເລີ່ມດັ່ງກ່າວ.

## ໃຊ້ຂະບວນການທີ່ເຂັ້ມງວດ ທີ່ກ່ຽວຂ້ອງກັບການຕັດສິນໃຈ ໃນສູນພັກເຊົາ:

> ທຸກໆການຕັດສິນໃຈ ທີ່ຈະກັກຂັງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະຕ້ອງເຮັດຂຶ້ນບົນພື້ນຖານຂອງກົດໝາຍ, ໃນລັກສະນະທີ່ບໍ່ມີການຈຳແນກ ບໍ່ວ່າເຫດຜົນໃດກໍຕາມ. ການກຳນົດຕ້ອງເຮັດຂຶ້ນສຳລັບແຕ່ລະບຸກຄົນ, ໂດຍບໍ່ນຳໃຊ້ບົນພື້ນຖານແບບປົກປະຕິ ຫຼື ແບບກຸ່ມໃນກໍລະນີ ບໍ່ມີຂັ້ນຕອນຂະບວນການທີ່ເໝາະສົມຂັ້ນຕອນຂະບວນການຄວນຖືກນຳສະເໜີ, ແລະ ຜູ້ທີ່ກ່ຽວຂ້ອງໃນການຕັດສິນໃຈຄວນຮັບຮູ້ຂັ້ນຕອນດັ່ງກ່າວ.

## ຍົກເລີກຈຸດປະສົງຍຸຕິທຳທາງອາຍາ ອອກຈາກການຕັດສິນໃຈ ທີ່ກ່ຽວຂ້ອງກັບສູນພັກເຊົາຜູ້ຖືກເຄາະຮ້າຍ:

> ພິຈາລະນາວິທີການທີ່ຈະບັນລຸຄຳຖະແຫຼງ ແລະ ຄຳໃຫ້ການທີ່ເປັນຫຼັກຖານຂອງຜູ້ຖືກເຄາະຮ້າຍ ໂດຍປາສະຈາກການກັກຂັງ ພວກເຂົາເປັນໄລຍະເວລາຍາວນານໃນສູນພັກເຊົາ. ຜູ້ປະຕິບັດຕົວຈິງໃນຂະບວນການຍຸຕິທຳທາງອາຍາຄວນຈະຮັບຮູ້ໂອກາດທີ່ມີຢູ່ໃນກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ, ລວມທັງການນຳໃຊ້ການໃຫ້ການກ່ອນການພິຈາລະນາຄະດີ, ບັນທຶກວິດີໂອ ການໃຫ້ການ ຫຼື ການໃຫ້ການຜ່ານວິດີໂອທາງໄກ. ບັນດານັກກົດໝາຍຄວນພິຈາລະນາອອກກົດໝາຍສຳລັບທາງເລືອກດັ່ງກ່າວ ຖ້າຫາກມັນຍັງບໍ່ມີກົນໄກນີ້ຄວນຖືກນຳສະເໜີເພື່ອຮັບປະກັນວ່າ ຜູ້ຖືກເຄາະຮ້າຍໄດ້ຮັບແຈ້ງຕໍ່ກັບຄວາມຄືບໜ້າຂອງຄະດີທີ່ພວກເຮົາມີສ່ວນຮ່ວມ ແລະ ສາມາດຮ້ອງຂໍຂໍ້ມູນໄດ້ຕະຫຼອດເວລາ.

## ເລັ່ງການດຳເນີນຄະດີ ການຄ້າມະນຸດ ເພື່ອຫຼຸດຜ່ອນພາລະຂອງຜູ້ຖືກເຄາະຮ້າຍທີ່ຢູ່ໃນສູນພັກເຊົາ:

> ໃນບາງປະເທດ ໄດ້ມີຄວາມພະຍາຍາມໃນການຫຼຸດໄລຍະເວລາຂອງຜູ້ຖືກເຄາະຮ້າຍ ທີ່ອາໄສຢູ່ໃນສູນພັກເຊົາທີ່ປິດລັບດ້ວຍການນຳໃຊ້ສານພິເສດ ແລະ ຝຶກອົບຮົມພິເສດໃຫ້ແກ່ຜູ້ພິພາກສາ ແລະ ໄອຍະການເພື່ອເລັ່ງດຳເນີນຄະດີການຄ້າມະນຸດ. ບົດຮຽນສາມາດຮຽນຮູ້ໄດ້ຈາກຄວາມພະຍາຍາມເຫຼົ່ານີ້ ແລະ ໂດຍການກະຕຸ້ນເຈົ້າໜ້າທີ່ສືບສວນ - ສອບສວນ, ໄອຍະການ ແລະ ຜູ້ພິພາກສາ ເພື່ອໃຫ້ເຂົ້າໃຈຕໍ່ກັບຜົນກະທົບທີ່ເກີດຂຶ້ນ ຕໍ່ກັບຄວາມຊັກຊ້າໃນການດຳເນີນຄະດີ ທີ່ມີຕໍ່ກັບຜູ້ຖືກເຄາະຮ້າຍທີ່ຢູ່ໃນສູນພັກເຊົາ.

## ແນະນຳນະໂຍບາຍ ທີ່ຄຸ້ມຄອງສູນພັກເຊົາ ເພື່ອ ຫຼຸດຜ່ອນພາລະຂອງພະນັກງານໃນສູນພັກເຊົາ:

> ບົດບາດຫຼັກຂອງພະນັກງານສູນພັກເຊົາ – ຜູ້ທີ່ສ່ວນໃຫຍ່ຈະເປັນນັກສັງຄົມສົງເຄາະ – ແມ່ນໃຫ້ການສະໜັບສະໜູນຜູ້ຖືກເຄາະຮ້າຍ. ຄວາມໄວ້ວາງໃຈ ແລະ ການລາຍງານ ທີ່ພະນັກງານຈະຕ້ອງໄດ້ສ້າງກັບຜູ້ຖືກເຄາະຮ້າຍ ມັກຖືກກີດຂວາງເມື່ອພວກເຂົາຖືກຈຳກັດການ ເຄື່ອນຍ້າຍ. ນອກນັ້ນ, ຜູ້ທີ່ເຮັດໜ້າທີ່ ເປັນເຈົ້າໜ້າທີ່ ຍັງໄດ້ສ້າງ ພາລະໃຫ້ແກ່ພະນັກງານເພີ່ມຂຶ້ນ ແລະ ອາດຈະເຮັດໃຫ້ພວກເຂົາມີຄວາມສ່ຽງຕໍ່ກັບການຖືກທຳຮ້າຍ. ນະໂຍບາຍຂອງສູນພັກເຊົາ ຄວນຈະຖືກທົບທວນ ແລະ ກວດແກ້ເພື່ອປົກປ້ອງນັກສັງຄົມສົງເຄາະຂອງສູນພັກເຊົາ ຈາກການປະຕິບັດໜ້າທີ່ປົກປ້ອງຜົນປະໂຫຍດຂອງຜູ້ຖືກເຄາະຮ້າຍ ແລະ ໃຫ້ການສະໜັບສະໜູນພາລະບົດບາດຂອງນັກສັງຄົມສົງເຄາະອີກດ້ວຍ.

## ແຍກຈຸດປະສົງຂອງການຄຸ້ມຄອງການເຂົ້າ - ອອກເມືອງ ອອກຈາກການຕັດສິນໃຈກ່ຽວກັບ ສູນພັກເຊົາ:

> ຮັບປະກັນວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນຄົນຕ່າງປະເທດ ຈະບໍ່ຖືກກັກຂັງທີ່ກ່ຽວຂ້ອງກັບການເຂົ້າ – ອອກເມືອງ, ຄວນມີການອະນຸຍາດທີ່ພັກເຊົາຊົ່ວຄາວ ແລະ ອອກໃບອະນຸຍາດໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ມີສິດ ໂດຍປາສະຈາກຄວາມຊັກຊ້າ ຫຼື ການນຳໃຊ້ລະບົບທາງການທີ່ບໍ່ເໝາະສົມ.

## ສຳຫຼວດທາງເລືອກອື່ນຕໍ່ກັບສູນພັກເຊົາ ຜ່ານການເບິ່ງແຍງດູແລໂດຍຊຸມຊົນ:

> ໃນກໍລະນີທີ່ເປັນໄປໄດ້,ຜູ້ຖືກເຄາະຮ້າຍຄວນຈະໄດ້ຮັບໂອກາດໃນການໄດ້ຮັບການເບິ່ງແຍງ ດູແລນອກລະບົບສູນພັກເຊົາ. ຜູ້ສະໜອງການບໍລິການ ຄວນຈະຊອກວິທີການໃນການຮັບຮອງພວກເຂົາໃນທີ່ພັກທີ່ປອດໄພ ແລະ ທີ່ພັກທີ່ເໝາະສົມ ລວມທັງ ການເຊົ່າເຮືອນ ຫຼື ອາພາດເມັ້ນ. ສິ່ງກີດຂວາງທີ່ຜູ້ຖືກເຄາະຮ້າຍອາດຈະພົບໃນການເຂົ້າເຖິງ ການບໍລິການໃນຊຸມຊົນ ຄວນຖືກກຳນົດ ແລະ ໄດ້ຮັບການແກ້ໄຂ.

## ລົງທຶນໃນການບໍລິການສະໜັບສະໜູນຜູ້ຖືກ ເຄາະຮ້າຍ ທີ່ສົ່ງເສີມທາງເລືອກອື່ນໃນການ ກັກຕົວຢູ່ໃນສູນພັກເຊົາ:

> ລັດ, ອົງການຈັດຕັ້ງທີ່ບໍ່ແມ່ນລັດ ແລະ ຜູ້ມີສ່ວນຮ່ວມອື່ນໆທີ່ເປັນຄູ່ຮ່ວມງານ ແລະ/ ຫຼື ທີ່ໃຫ້ທຶນສະໜັບສະໜູນ ສູນພັກເຊົາ, ຄວນຈະໃຫ້ບູລິມະສິດ ແກ່ຜູ້ທີ່ສະໜອງການ ບໍລິການຜູ້ທີ່ສົ່ງເສີມຮູບແບບທີ່ສູນພັກເຊົາທີ່ເບິ່ງແຍງດູແລ ຜູ້ຖືກເຄາະຮ້າຍໃນຊຸມຊົນ. ຜູ້ໃຫ້ທຶນ ແລະ ຜູ້ອື່ນໆ ມີໜ້າທີ່ ຮັບຜິດຊອບເພື່ອຮັບປະກັນວ່າ ການປະຕິບັດຂອງພວກເຂົາບໍ່ໄດ້ສ້າງແຮງຈູງໃຈໃນການກັກຂັງໃນສູນພັກເຊົາ ແຕ່ປະການໃດ.

## ແຕ່ງຕັ້ງຜູ້ປົກປ້ອງໃຫ້ແກ່ຜູ້ຖືກເຄາະຮ້າຍ ທີ່ເປັນເດັກທຸກຄົນ:

> ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນເດັກທຸກຄົນ ( ຫຼື ຖືກສັນນິຖານວ່າເປັນຜູ້ຖືກເຄາະຮ້າຍ) ຄວນໄດ້ຮັບການແຕ່ງຕັ້ງຜູ້ປົກຄອງທີ່ມີຄວາມສາມາດ ແລະ ໄດ້ຮັບການຝຶກອົບຮົມ ເຊິ່ງຈະເປັນຄົນທີ່ຮັບຜິດຊອບໃນການປົກປ້ອງຜົນປະໂຫຍດສູງສຸດຂອງເດັກ. ຖ້າເດັກ ຖືກກັກຂັງໃນສູນພັກເຊົາ, ມັນເປັນໜ້າທີ່ຂອງຜູ້ປົກຄອງ (ເຊິ່ງເປັນຜູ້ທີ່ຄວນເປັນເອກະລາດ ແລະ ມີຄວາມເປັນກາງ ເຊິ່ງໄດ້ຮັບການແຕ່ງຕັ້ງໂດຍໜ່ວຍງານທີ່ມີສິດອຳນາດແຫ່ງຊາດ) ເພື່ອຮັບປະກັນວ່າ ( ແລະ ຍັງຄົງສືບຕໍ່) ຜົນປະໂຫຍດສູງສຸດຂອງເດັກ ແລະ ຂະບວນການທີ່ກ່ຽວຂ້ອງ ແລະ ສິດອື່ນໆຂອງເດັກໄດ້ຮັບການເຄົາລົບຢ່າງເຕັມສ່ວນ.